# ຄວາມຝັນ ຂອງ ອາເມີ



ເຫລັ້ມ 1







ແຜນທີ່ 20 ບ້ານເປົ້າໝາຍຂອງໂຄງການຢູ່ເມືອງຫຼວງນ້ຳທາ

ຢູ່ໃນແຂວງຫລວງນ້ຳທາ ບໍ່ມີພຽງແຕ່ ເດັກນ້ອຍແມ່ຍິງຊົນເຜົ່າອາຄ່າເທົ່ານັ້ນ, ແຕ່ຍັງມີເດັກນ້ອຍຫລາຍຊົນເຜົ່າ ທີ່ຍັງຂາດການດູແລ ເອົາໃຈໃສ່ສົ່ງເສີມດ້ານການສຶກສາຈາກພໍ່ແມ່.

ດັ່ງນັ້ນ, ຈຶ່ງຂໍຮຽກຮ້ອງມາຍັງຜູ້ປົກຄອງຂອງເດັກ ຈົ່ງເຫັນຄວາມສຳຄັນຂອງການສຶກສາ ເພື່ອອະນາຄົດຂອງລູກຫລານ ກໍ່ຄືອະນາຄົດຂອງຊາດບ້ານເມືອງ.




ແຜນທີ່ 20 ບ້ານເປົ້າໝາຍຂອງໂຄງການຢູ່ເມືອງສິງ

| | | |
|---|---|---|
| ▲ | ເຜົ່າອາຄ່າ | AKHA |
| ★ | ເຜົ່າລື້ | LÜ |
| ● | ເຜົ່າມົ້ງ | HMONG |
| ⬟ | ເຜົ່າໄທດຳ | THAI DAM |
| ■ | ເຜົ່າພູນ້ອຍ | PHOU NOIG |

# ຄວາມຝັນ ຂອງ ອາເມີ



# ຄຳນຳ

ຢາກພັດທະນາສັງຄົມ ແລະ ປະເທດຊາດ ທຸກຄົນໃນຊາດຕ້ອງມີການສຶກສາ ໂດຍສະເພາະແມ່ນ ແມ່ຍິງ ແລະ ເດັກນ້ອຍຍິງ ບັນດາເຜົ່າທີ່ຢູ່ຫ່າງໄກສອກຫລີກ.

ປື້ມກາຕູນຊຸດ " ຄວາມຝັນຂອງ ອາເມີ " ຜະລິດຂຶ້ນເພື່ອ ເປັນແຮງກະຕຸກຊຸກຍູ້ ເດັກຊົນເຜົ່າໃຫ້ຮູ້ຈັກໂຮງຮຽນ, ຮູ້ວ່າໂຮງຮຽນໃຫ້ຫຍັງແກ່ເຂົາເຈົ້າ ແລະ ມີຄວາມສຳຄັນພຽງໃດ ຕໍ່ຊີວິດຂອງພວກເຂົາ ດັ່ງນັ້ນພວກເຮົາຫວັງວ່າ ຜູ້ເປັນພໍ່ແມ່, ອ້າຍ, ເອື້ອຍ ແລະ ທຸກໆຄົນ ຈະຊ່ວຍກັນຊຸກຍູ້ ແລະ ສ້າງຄວາມຝັນຂອງພວກເຂົາໃຫ້ເປັນຄວາມຈິງ.

ເພື່ອຄວາມສະດວກ ແລະ ເຂົ້າໃຈໃນການເບິ່ງ, ການອ່ານຂອງທຸກຄົນ ພວກເຮົາມີຂໍ້ແນະນຳບາງຢ່າງກ່ຽວກັບເຄື່ອງໝາຍຕ່າງໆ ໃນຮູບພາບດັ່ງນີ້:



ເຄື່ອງໝາຍ : ການເວົ້າ



ເຄື່ອງໝາຍ : ການຄິດ




ເຄື່ອງໝາຍ : ການຄິດບໍ່ເຂົ້າໃຈ



ເຄື່ອງໝາຍ : ການຝັນ


ຄອບຄົວ ຂອງ ອາເມີ
ນ້ອງ
ແມ່
ພໍ່
ອາເມີ
ນ້ອງນ້ອຍ
ຄູ ຕ່ອງ ໂຊະ



ທີ່ໝູ່ບ້ານ ຊິບເຜົ່າອີ່ກໍ້ແຫ່ງໜຶ່ງ ຂອງເມືອງສິງ ແຂວງຫລວງນໍ້າທາ, ໝູ່ບ້ານແຫ່ງນີ້ ຕັ້ງຢູ່ເນີນພູ. ອາຊີບ ຂອງຊາວບ້ານສ່ວນໃຫຍ່ແມ່ນ ເຮັດໄຮ່, ເຮັດສວນ....

ໃນໝູ່ບ້ານແຫ່ງນີ້ ມີກະຕູບນ້ອຍໆຫລັງໜຶ່ງ ອາໃສຢູ່ນຳກັນ 5 ຄົນ.

" ອາເມີ ເອີຍ ! ຕຽມເຄື່ອງອອກໄປໄຮ່ໄວໆ " ສຽງແມ່ຂອງນາງຮ້ອງມາໃສ່.



ອາເມີ ເປັນລູກສາວກົກ, ອາຍຸຂອງລາວໄດ້ 10 ປີແລ້ວ. ທຸກໆມື້ ລາວຕ້ອງຕື່ນແຕ່ເຊົ້າ ເຮັດວຽກຊ່ວຍ ພໍ່ແມ່ : ຕັກນໍ້າ, ເກືອໝູ ແລະ ໄປໄຮ່ ເພື່ອຊອກຟືນ ພ້ອມທັງເອົານ້ອງ.



ອາເມີ ກຽມເຄື່ອງແລ້ວ ກໍ່ຍ່າງນຳພໍ່ແມ່ ໄປໄຮ່ຕາມປົກກະຕິ ພ້ອມກັບນ້ອງຊາຍ.
ທຸກໆມື້ທີ່ ອາເມີ ໄປໄຮ່ ລາວຕ້ອງຍ່າງຜ່ານໂຮງຮຽນ, ໃນທຸກໆເທື່ອທີ່ຜ່ານໂຮງຮຽນ
ລາວຈະໄດ້ຍິນສຽງຂອງໝູ່ເພື່ອນ ເວົ້າພ້ອມກັບຕາມຄູ.






ມື້ນີ້ ກໍ່ເຊັ່ນດຽວກັນ ໝູ່ເພື່ອນທີ່ເປັນນັກຮຽນ
ພ້ອມກັນເວົ້າຕາມຄູ ແຕ່ ອາເມີບໍ່ເຂົ້າໃຈ
ເພາະວ່າ ລາວບໍ່ເຄີຍເຂົ້າໂຮງຮຽນ.

" ອາເມີ ! ນ້ອງໄຫ້ ເອົານ້ອງແດ່ ແມ່ນຄິດຫຍັງຢູ່ ? "
ແມ່ຂອງ ອາເມີ ຮ້ອງໃສ່. ອາເມີ ຕອບແມ່ຂອງລາວວ່າ :
"ລູກກາຍໂຮງຮຽນມາທຸກມື້ໄດ້ຍິນພວກພູ່ພ້ອມກັນ
ເວົ້ານຳ ອ້າຍຄູ ແມ່ນພວກເຂົາເວົ້າຫຍັງ ທີ່ແມ່ ?"
ແມ່ຂອງອາເມີຕອບວ່າ :
" ໂອຍຢ່າສົນໃຈ ມັນບໍ່ມີປະໂຫຍດຫຍັງດອກ
ເຮັດວຽກຊ່ວຍແມ່ດີກວ່າ "

ເຖິງວ່າແມ່ຂອງລາວຈະ
ເວົ້າແນວໃດກໍ່ຕາມ ແຕ່
ອາເມີກໍ່ຍັງຄິດເຖິງ
ເລື້ອງນັ້ນຢູ່.



ເມື່ອອາເມີ ກັບມາແຕ່ໄຮ່ ກໍ່ໃກ້ຄ່ຳ ແດ່ແລ້ວ ບັນດານັກຮຽນກໍ່ພາກັນ
ກັບບ້ານໝົດ ເຫລືອພຽງແຕ່ ໂຕະ ຕັ່ງ ແລະ ກະດານ ທີ່ມີ
ຕົວໜັງສື ຂຽນເປັນແຖວ ອາເມີ  ຈຶ່ງຍ່າງເຂົ້າໄປເບິ່ງ
ແຕ່ລາວບໍ່ຮູ້ວ່າຢູ່ກະດານນັ້ນແມ່ນຫຍັງ ?






ມື້ນີ້ ອາເມີ ບໍ່ໄດ້ໄປໄຮ່ ນຳພໍ່ແມ່, ຍ້ອນລາວ ຍັງສົງໃສວ່າ ໝູ່ພາ ກັນເວົ້າຫຍັງ ? ລາວຈຶ່ງ ເຈ່ຽນ້ອງຍ່າງມາ ໂຮງຮຽນ , ໃນເວລານັ້ນ ອ້າຍດູ ກຳລັງຖາມ ນັກຮຽນກ່ຽວກັບ ການບວກ ເລກ ນັກຮຽນທຸກຄົນຕອບພ້ອມໆກັນ ຢ່າງເບີກບານ ມ່ວນຊື່ນ. ແຕ່ອາເມີ ບໍ່ເຂົ້າໃຈຫຍັງເລີຍ.



ຄູຕ່ອງໂຊະ ແນມເຫັນ ອາເມີ ຢືນເບິ່ງດ້ວຍຄວາມສົນໃຈ ຈຶ່ງຍ່າງມາຖາມ: " ອາເມີ ເຈົ້າຕ້ອງການມາຮຽນໜັງສືຄືກັນກັບໝູ່ເພື່ອນບໍ ? "

ອາເມີ ງຶກຫົວ ຄູຕ່ອງໂຊະຈຶ່ງຖາມຕໍ່ວ່າ: " ເປັນຫຍັງເຈົ້າຈຶ່ງບໍ່ມາເຂົ້າໂຮງຮຽນ ". ອາເມີຕອບວ່າ : " ແມ່ບໍ່ໃຫ້ມາເຂົ້າ ".



ໃນຕອນແລງຂອງມື້ດຽວກັນນັ້ນ
ຄູຕ່ອງໂຊະ ໄດ້ໄປເຮືອນຂອງ ອາເມີ
ຫລັງຈາກການເກີງຄວາມທຸກສຸກຂອງ
ຄອບຄົວອາເມີ ແລ້ວ.
ຄູຈຶ່ງຖາມ ພໍ່ແມ່ ຂອງ ອາເມີ ວ່າ:
" ພໍ່ລຸງເອີຍ ! ເປັນຫຍັງຈຶ່ງບໍ່ໃຫ້ອາເມີ
ໄປເຂົ້າໂຮງຮຽນຄືກັນກັບໝູ່ເພື່ອນ ? "



ພໍ່ ຂອງອາເມີ ຕອບລູ ຕ່ອງໂຊະວ່າ :
" ອາເມີ ຕ້ອງເຮັດວຽກ ຊ່ວຍພວກລຸງ ຕ້ອງເອົານ້ອງ , ເອົາຟືນ ແລະ ຕັກນ້ຳ"
ລູຕ່ອງໂຊະຈຶ່ງໃຫ້ເຫດຜົນ ແລະ ອະທິບາຍໃຫ້ ພໍ່ຂອງອາເມີ ຟັງວ່າ :
" ການຮຽນໜັງສືຈະເຮັດໃຫ້ ຊີວິດຂອງອາເມີ ດີຂຶ້ນໃນເມື່ອເວລານາງໃຫຍ່ຂຶ້ນມາ"

ລູຕ່ອງໂຊະ ໄດ້ອະທິບາຍຕໍ່ໄປອີກວ່າ :




" ກ້າຫາກອາເມີໄດ້ເຂົ້າໂຮງຮຽນ ລາວຈະໄດ້ຮຽນພາສາລາວ, ຮຽນເລກ, ລາວຈະເວົ້າພາສາລາວໄດ້ ຮູ້ຈັກການຄິດໄລ່ ແລະ ຕໍ່ລອງ ເມື່ອເວລາລາວໄປຊື້-ໄປຂາຍ ແລະ ແລກປ່ຽນສິ່ງຂອງຕ່າງໆ... "



ພໍ່ແມ່ ຂອງອາເມີ ນັ່ງບໍ່ປາກ.

ຄູ ຕ່ອງໂຊະ ຈຶ່ງເວົ້າຕໍ່ :

" ສິ່ງສຳຄັນ ອາເມີ ສາມາດ ອ່ານພັງສືໄດ້ ຈະຊ່ວຍໃຫ້ພວກເຈົ້າຮູ້ຂ່າວສານ ບ້ານ ເມືອງ ແລະ ເລື້ອງອື່ນໆ ໄດ້ອີກ "

" ອີກຢ່າງໜຶ່ງ ລູກສາວຂອງພວກລຸງ ກໍ່ຈະມີຄວາມຮູ້. ມີວຽກເຮັດ ແລະ ມີອານາຄົດທີ່ດີ ".

ຄູຕ່ອງໂຊະ ໄດ້ໂອ້ລົມ ແລະ ອະທິບາຍ ໃຫ້ ພໍ່ແມ່ຂອງອາເມີຟັງ ພວກເພິ່ນຈຶ່ງຕົກລົງ ໃຫ້ ອາເມີ ໄປໂຮງຮຽນ.

**ຄືນນີ້** ເປັນຄືນທີ່ ອາເມີ ມີຄວາມສຸກທີ່ສຸດ ນາງເກືອບນອນບໍ່ຫລັບ ສິ່ງທີ່ຄິດ ແລະ ຝັນ ກຳລັງຈະເປັນຄວາມຈິງ...






ທີ່ຫ້ອງຮຽນຂອງເຊົ້າມື້ນີ້ ເປັນມື້ທີ່ ອາເມີ
ມີຄວາມສຸກ ເພາະວ່າ
ອາເມີ ໄດ້ມາເຂົ້າໂຮງຮຽນ
ໄດ້ພົບກັບ ໝູ່ເພື່ອນ
ໄດ້ຮຽນໜັງສື ນຳ ອ້າຍຄູ ທີ່ໃຈດີ.

**ອາເມີ ຄິດວ່າ ຈະຕັ້ງໃຈຮ່ຳຮຽນ ໃຫ້ສົມກັບ ຄວາມຝັນຂອງລາວ ...**

( ຈົບເຫລັ້ມ ທີ1 )

ເຊີນທ່ານ ຕິດຕາມອ່ານຕໍ່ ເຫລັ້ມ ທີ 2



ເລື້ອງ **ຄວາມຝັນຂອງ ອາເມີ** ເຫລັ້ມ 1

ພິມຄັ້ງທີ 1 ຄ.ສ 2003 / ຈຳນວນ 2.000 ສະບັບ

<u>ເນື້ອໃນ ແລະ ຮູບປະກອບໂດຍ:</u>

**ອົງການ ໂຮງຮຽນບໍ່ມີຊາຍແດນ**

<u>ອຸປະຖຳທຶນໂດຍ:</u>

**ກອງທຶນ ການາດາ**

<u>ອຸປະຖຳການພິມໂດຍ:</u>

**ກອງທຶນ ການາດາ**

---

**AMER'S Dream** © Book 1

First Print 2003 / 2.000 Copies

<u>**Content and illustrations by**</u>

**ECOLES SANS FRONTIÈRES**

<u>**Creation work funded by**</u>

**CANADA FUND**

<u>**Printing funded by**</u>

**CANADA FUND**

**Le rêve d'AMER** © Tome 1

1° Impression 2003 / 2.000 exemplaires

<u>**Contenu et illustrations par**</u>

**ECOLES SANS FRONTIÈRES**

<u>**Creation financée par**</u>

**CANADA FUND**

<u>**Impression financée par**</u>

**CANADA FUND**

ພິມທີ່: ສີສະຫວາດການພິມ



ອົງການໂຮງຮຽນບໍ່ມີຊາຍແດນ
ECOLES SANS FRONTIÈRES

Sokpaluang Rd. Sisattanak District VIENTIANE LAO PDR
P.O Box : 3182 / Tel: ( 856-21) 350845 / Fax : ( 856-21) 314307
E-mail : oesflaos@laotel.com